ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມວິທະຍາສາດກ່ຽວກັບວຽກງານປົກປ້ອງເງິນຝາກໄດ້ຈັດຂຶ້ນ ເພື່ອເປັນການສະເຫຼີມສະຫຼອງວັນສ້າງຕັ້ງ ສປງ




ໃນຕອນເຊົ້າຂອງວັນທີ 23 ກັນຍາ 2023 ທີ່ສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ຈັດກອງປະຊຸມສຳມະນາວິທະຍາສາດກ່ຽວກັບວຽກງານປົກປ້ອງເງິນຝາກ ໂດຍການເປັນປະທານຂອງທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ສຳນັກງານປົກປ້ອງເງິນຝາກ ມີຜູ້ເຂົ້າຮ່ວມຈາກກຳມະການສະພາບໍລິຫານ ສປງ, ຕາງໜ້າຄະນະກົມຈາກ ທະນາຄານແຫ່ງ ສປປ ລາວ, ສະມາຄົມທະນາຄານ ແລະ ສະຖາບັນການເງິນຈຸລະພາກ ເຂົ້າຮ່ວມຫຼາຍກວ່າ 100 ທ່ານ.




ກອງປະຊຸມວິທະຍາສາດຄັ້ງນີ້ ໄດ້ຈັດຂຶ້ນໃນທ່າມກາງບັນຍາກາດຂອງການສະເຫຼີມສະຫຼອງວັນສ້າງຕັ້ງ ສປງ ຄົບຮອບ 24 ປີ (23 ກັນຍາ 1999 ຫາ 23 ກັນຍາ 2023). ພ້ອມກັນນີ້, ກໍເພື່ອເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກຂອງ ສປງ ໃນໄລຍະຜ່ານມາຄຽງຄູ່ກັບການຜັນຂະຫຍາຍ-ຈັດຕັ້ງປະຕິບັດດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ບັນດານິຕິກຳທີ່ຕິດພັນກັບວຽກງານປົກປ້ອງເງິນຝາກ. ນອກ ຈາກນີ້, ກໍເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ກັບການປະຕິບັດພາລະບົດບາດຂອງ ສປງ, ວຽກງານປົກປ້ອງເງິນຝາກທີ່ຕິດພັນກັບສະເຖຍລະພາບທາງດ້ານການເງິນ, ການປະຕິບັດພັນທະຂອງສະມາຊິກຂອງ ສປງ ແລະ ການປະຕິບັດຕາມຫຼັກການສຳຄັນຂອງລະບົບປະກັນໄພເງິນຝາກທີ່ມີປະສິດທິຜົນທີ່ສະມາຄົມປະກັນໄພເງິນຝາກສາກົນ ແລະ ຄະນະກຳມະການຄຸ້ມຄອງທະນາຄານຂອງບາໂຊໄດ້ຮ່ວມກັນສ້າງຂຶ້ນ.



ສປງ ເປັນສ່ວນໜຶ່ງຂອງຕາໜ່າງຄວາມປອດໄພທາງດ້ານການເງິນ ຮ່ວມກັບບັນດາພາກສ່ວນອື່ນ ເປັນຕົ້ນ ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ໃນການຮັກສາສະເຖຍລະພາບທາງດ້ານການເງິນ ຂອງ ສປປ ລາວ. ສປງ ມີພາລະບົດບາດ, ສິດ ແລະ ໜ້າທີ່ ປົກປ້ອງເງິນຝາກ ດ້ວຍການຈ່າຍເງິນປົກປ້ອງໃຫ້ແກ່ຜູ້ຝາກເງິນ ຕາມວົງເງິນປົກປ້ອງທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ໃນກໍລະນີທີ່ສະຖາບັນການເງິນທີ່ເປັນສະມາຊິກຂອງຕົນຫາກຕົກຢູ່ໃນພາວະລົ້ມລະລາຍ. ປັດຈຸບັນ ສປງ ມີສະມາຊິກຈຳນວນ 45 ແຫ່ງ. ໃນນັ້ນ, ເປັນທະນາຄານທຸລະກິດ 40 ແຫ່ງ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 5 ແຫ່ງ ຊຶ່ງສະແດງໃຫ້ເຫັນວ່າ 75% ຂອງສະຖາບັນການເງິນທີ່ຮັບເງິນຝາກທັງໝົດໃນ ສປປ ລາວ ແມ່ນສະມາຊິກຂອງ ສປງ.

ຂ່າວ: ພະແນກເລຂານຸການ ແລະ ພິທີການ, ຫ້ອງການ ທຫລ

ພາບ: ສຳນັກງານປົກປ້ອງເງິນຝາກ

*ເສດຖະກິດຈະຂັ້ມແຂງຖ້າເຮົາຮ່ວມໃຈໃຊ້ເງິນກີບ*